ສຳນັກງານ ຄຄຊ
ຮັບ ເລກທີ 1035
ວັນທີ 19 SEP 2017
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 09 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 19 ກັນຍາ 2017

# ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ ສິງຫາ 2017 ແລະ ທິດທາງແຜນການໃນຕໍ່ໜ້າ

## ພາກທີ I
## ຕີລາຄາສະພາບການເຄື່ອນໄຫວວຽກງານທີ່ພົ້ນເດັ່ນຂອງທະນາຄານໃນໄລຍະຜ່ານມາ

### I. ວຽກງານການເມືອງ-ແນວຄິດ

ໃນໜຶ່ງເດືອນຜ່ານມາ, ສະພາບການເມືອງແນວຄິດຂອງສະມາຊິກພັກ-ພະນັກງານພາຍໃນຂະແໜງທະນາຄານ ມີຄວາມສະຫງົບປົກກະຕິ, ມີຄວາມອຸ່ນອ່ຽນທຸ່ນທ່ຽງ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ-ລະບຽບວິໄນ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກ ແລະ ເອົາໃຈໃສ່ໃນການປະຕິບັດໜ້າທີ່ການເມືອງຂອງຕົນໄດ້ເປັນຢ່າງດີ ຊຶ່ງສາມາດສະຫຼຸບຕີລາຄາສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ ປະຈຳເດືອນ ສິງຫາ 2017 ແລະ ທິດທາງແຜນການໃນເດືອນ ກັນຍາ 2017 ດັ່ງລາຍລະອຽດລຸ່ມນີ້:

### II. ສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ.

- ໄດ້ເຂົ້າຮ່ວມກອງປະຊຸມຕ່າງໆ: ກອງປະຊຸມກົມການເມືອງ; ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ ສິງຫາ 2017; ກອງປະຊຸມນາຍົກ-ຮອງນາຍົກ ປະຈຳເດືອນ ສິງຫາ 2017; ກອງປະຊຸມທີມງານເສດຖະກິດຂອງລັດຖະບານ; ກອງປະຊຸມປຶກສາຫາລືການແກ້ໄຂໂຄງການຂອງລັດດ້ວຍການອ່ວຍໜີ້; ກອງປະຊຸມປຶກສາຫາລືກ່ຽວກັບການສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ, ວຽກງານຈຸດສຸມ 6 ເດືອນທ້າຍປີ 2017 ແລະ ການສ້າງແຜນປະຈຳປີ 2018: ກອງປະຊຸມຮ່ວມກັບຄະນະປະຈຳສະພາແຫ່ງຊາດກັບຄະນະລັດຖະບານ; ກອງປະຊຸມຄົບຄະນະຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບ ປະຈຳປີ 2017; ກອງປະຊຸມວັນຄົບຮອບ 25 ປີ ສາຍພົວພັນອາຊຽນ-ອິນເດຍ; ເຂົ້າຮຽນບຳລຸງພາສາອັງກິດ ຢູ່ປະເທດສິງກະໂປ (ໄລຍະ 1 ເດືອນ);
- ສຳເລັດການຈັດກອງປະຊຸມຕ່າງໆ: ກອງປະຊຸມປຶກສາຫາລືແກ້ໄຂວຽກງານການເຄື່ອນໄຫວຂອງບັນດາບໍລິສັດທີ່ດຳເນີນທຸລະກິດທາງດ້ານການເງິນທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບຂອງ ສປປ ລາວ; ກອງປະຊຸມສະພາບໍລິຫານສະຖາບັນການທະນາຄານ; ກອງປະຊຸມທາບທາມຮ່າງດຳລັດວ່າດ້ວຍການປົກປ້ອງຜູ້ບໍລິໂພກທາງການເງິນ; ກອງປະຊຸມປຶກສາຫາລືກ່ຽວກັບການຫັນລະບົບການນຳໃຊ້ບັດທະນາຄານຮ່ວມກັນລະຫວ່າງທະນາຄານໃນ ສປປ ລາວ; ກອງປະຊຸມຄົ້ນຄວ້າຮ່າງດຳລັດສູນຂໍ້ມູນຂ່າວສານສິນເຊື່ອ;
- ສຳເລັດການຈັດສຳມະນາຕ່າງໆ: ຈັດສຳມະນາທາງດ້ານວິຊາການໃນຫົວຂໍ້: "ການວາງແຜນຈັດຕັ້ງປະຕິບັດຫຼັກການຄຸ້ມຄອງບໍລິຫານ"; ຈັດຝຶກອົບຮົມໃນຫົວຂໍ້: "ການນຳໃຊ້ເຄື່ອງຈັກຄັດໄຈ້ທະນະບັດ DLR 7000 ແລະ DLR Cobra"; ໃນຫົວຂໍ້: "ເຕັກໂນໂລຊີທາງດ້ານການເງິນ (Fintech)" ແລະ ໃນຫົວຂໍ້: "ວຽກງານໂຮງພິມທະນະບັດ";
- ສຳເລັດການຈັດຕັ້ງພິທີ ແລະ ເຂົ້າຮ່ວມພິທີຕ່າງໆ: ສຳເລັດການເປີດຮຽນສະໜັບສະໜູນພັກໃຫ້ມະຫາຊົນຜູ້ກ້າວໜ້າ ປະຈຳປີ 2017; ສຳເລັດການເຂົ້າຮ່ວມອວຍພອນພະນັກງານບຳນານເພດຍິງ ທຫລ ເນື່ອງໃນໂອກາດວັນ

ສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 62 ປີ; ສໍາເລັດການເຂົ້າຮ່ວມພິທີເປີດທະນາຄານລາວ-ຈີນ ສາຂາບໍ່ເຕັນ ຢູ່ແຂວງຫຼວງນໍ້າທາ; ສໍາເລັດການເຂົ້າຮ່ວມຮັບຟັງການເຜີຍແຜ່ວຽກງານພົວພັນການຕ່າງປະເທດພາຍໃຕ້ຫົວຂໍ້: "ກາລະໂອກາດ ແລະ ສິ່ງທ້າທາຍພາຍໃນ 3 ເສົາຄໍ້າປະຊາຄົມອາຊຽນທີ່ມີຕໍ່ຊາວໜຸ່ມລາວ";

- ສໍາເລັດການຕ້ອນຮັບແຂກສາກົນເຂົ້າພົບປະຄະນະນໍາ ທຫລ ມີ ທ່ານ ເອກອັກຄະລັດຖະທູດ ຜູ້ມີອໍານາດເຕັມຂອງ ສປ. ຈີນ ຄົນໃໝ່ ປະຈໍາຢູ່ ສປປ ລາວ; ຜູ້ຕາງໜ້າຈາກສະພາທຸລະກິດອາເມລິກາ-ອາຊຽນ; ຜູ້ຕາງໜ້າຫ້ອງການທະນາຄານໂລກຄົນໃໝ່ ປະຈໍາ ສປປ ລາວ; ຄະນະຜູ້ແທນຈາກ ທະນາຄານແຫ່ງປະເທດຈີນ ສາຂາຮົ່ງກົງ; ຄະນະຜູ້ແທນຈາກ ທະນາຄານ Well Fargo; ນັກຂ່າວຈາກໜັງສືພິມ BIZ News ຂອງເຢຍລະມັນ.

## III. ສະພາບພົ້ນເດັ່ນການເຄື່ອນໄຫວວຽກງານວິຊາສະເພາະ

ໃນ 1 ເດືອນຜ່ານມາ, ທະນາຄານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ຕິດຕາມສະພາບເສດຖະກິດສາກົນ; ຕະຫຼາດເງິນຕາພາຍໃນ; ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ; ການເຄື່ອນໄຫວຊໍາລະສະສາງ ແລະ ການຊື້-ຂາຍພັນທະບັດ; ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບຢ່າງເປັນປົກກະຕິ ໂດຍມີສະພາບຄ່ອງດີ ເຊິ່ງສະແດງອອກຄື:

### 1. ສະພາບເສດຖະກິດເງິນຕາສາກົນ.

- ໃນເດືອນ 8/2017, ເສດຖະກິດໂລກສືບຕໍ່ຂະຫຍາຍຕົວ ແລະ ຄາດວ່າຈະຢູ່ໃນລະດັບ 3,5% ໃນປີ 2017 ແລະ 3,6% ໃນປີ 2018. ສະພາບເສດຖະກິດໂລກ ມີການຟື້ນຕົວທີ່ແຕກຕ່າງກັນໃນແຕ່ລະຂົງເຂດ. ໃນນັ້ນ, ບັນດາປະເທດເສດຖະກິດທີ່ພັດທະນາແລ້ວ ມີທ່າອ່ຽງຂະຫຍາຍຕົວຫຼຸດລົງ ເຊັ່ນ: ສ. ອາເມລິກາ ແລະ ອັງກິດ, ສໍາລັບປະເທດເກຣັກ ສາມາດລະດົມເງິນຈາກຕະຫຼາດທຶນໄດ້ຄັ້ງທໍາອິດໃນຮອບກວ່າ 3 ປີ ຊຶ່ງຊີ້ໃຫ້ເຫັນເຖິງແຮງກົດດັນຈາກບັນຫາໜີ້ສິນສາທາລະນະໄດ້ຜ່ອນຄາຍລົງ ສິ່ງຜົນເຮັດໃຫ້ທະນາຄານກາງເອີຣົບ ECB ເລີ່ມສົ່ງສັນຍານຈະຫຼຸດການກະຕຸ້ນເສດຖະກິດລົງໃນຕໍ່ໜ້າ. ເຖິງຢ່າງໃດກໍ່ຕາມ, ບັນດາປະເທດເສດຖະກິດເກີດໃໝ່ ແລະ ກໍາລັງພັດທະນາ ສະພາບເສດຖະກິດສືບຕໍ່ມີທ່າອ່ຽງຂະຫຍາຍຕົວເພີ່ມຂຶ້ນ ເປັນຕົ້ນ: ສປ. ຈີນ ແລະ ອາຊຽນ +5. ໃນຂະນະທີ່, ອັດຕາເງິນເຟີ້ຂອງບັນດາປະເທດໃນເດືອນ 7/2017 ຢູ່ໃນລະດັບຕໍ່າ ແລະ ຕໍ່າກວ່າເປົ້າໝາຍເງິນເຟີ້ຂອງຕົນ ເປັນຕົ້ນ: ປະເທດລັດເຊຍ, ບຣາຊິວ, ອິນເດຍ ແລະ ໄທ;

- ເງິນໂດລາອ່ອນຄ່າ 3.36% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງ ສ.ອາເມລິກາ ອອກມາບໍ່ດີເປັນຕົ້ນຈໍານວນປະຊາຊົນທີ່ຂໍສະຫວັດດີການວ່າງງານຄັ້ງທໍາອິດຂອງອາທິດທີ 22/07/2017 ເພີ່ມຂຶ້ນເປັນ 244.000 ຄົນ ຈາກ 234.000 ຄົນ ໃນອາທິດຜ່ານມາ, ຕົວເລກຍອດຂາຍບ້ານປະຈໍາ ຫຼຸດລົງ 1,80% ຂອງເດືອນ 06/2017 ຈາກເພີ່ມຂຶ້ນ 1,10% ໃນເດືອນຜ່ານມາ; ພ້ອມກັນນັ້ນ, ຕົວເລກດັດຊະນີພາກອຸດສາຫະກໍາໂຮງງານຫຼຸດລົງເປັນ 56.3 ຈຸດ ຂອງເດືອນ 07/2017 ຈາກ 57.8 ຈຸດໃນເດືອນຜ່ານມາ ແລະ ການໃຊ້ຈ່າຍໃນຂະແໜງການກໍ່ສ້າງ ຫຼຸດລົງ 1,30% ຂອງເດືອນ 6/2017 ຈາກເພີ່ມຂຶ້ນ 0,03% ໃນເດືອນຜ່ານມາ;

- ລາຄານໍ້າມັນ ເພີ່ມຂຶ້ນ 7,06% ຈາກ 45.25 ໂດລາ/ບາເຣວ ມາເປັນ 48,45 ໂດລາ/ບາເຣວ ເນື່ອງຈາກພາຍຫຼັງຄັງສໍາຮອງນໍ້າມັນດິບ ຂອງ ສ.ອາເມລິກາ ຫຼຸດລົງ 1,53 ລ້ານບາເຣວ ຂອງອາທິດທີ 28/07/2017 ຈາກຫຼຸດລົງ 7,21 ລ້ານບາເຣວໃນອາທິດຜ່ານມາ. ພ້ອມກັນນັ້ນ,ໃນກອງປະຊຸມລະຫວ່າງຜູ້ຜະລິດນໍ້າມັນດິບໃນກຸ່ມໂອເປກ ແລະ ນອກກຸ່ມໂອເປກ ໃນວັນທີ 24/07/2017, ປະເທດຊາອຸດິອາຣະເບຍໄດ້ປະເທດຫຼຸດການສົ່ງອອກນໍ້າມັນດິບ ໃນເດືອນ 08/2017 ບໍ່ໃຫ້ເກີນລະດັບ 6,60 ລ້ານບາເຣວ/ວັນ ເຊິ່ງຕໍ່າກວ່າເດືອນດຽວກັນຂອງປີຜ່ານມາ 1 ລ້ານບາເຣວ/ວັນ. ສ່ວນລາຄາຄໍາ ເພີ່ມຂຶ້ນ 1,37% ຈາກ 1.238,81 ໂດລາ/ອອນ ມາເປັນ 1.255,81 ໂດລາ/ອອນ ເນື່ອງຈາກນັກລົງທຶນເຂົ້າຊື້ຄໍາ ແລະ ສັນຍາຊື້-ຂາຍຄໍາ ເພື່ອເກງກໍາໄລ ແລະ ປ້ອງກັນຄວາມສ່ຽງຈາກການຜັນຜວນຂອງເສດຖະກິດ.

### 2. ສະພາບເງິນຕາພາຍໃນ.

- ອັດຕາເງິນເຟີ້ປະຈໍາເດືອນ 08/2017 (ຕົວເລກຄາດຄະເນ) ຢູ່ໃນລະດັບ 0,11% ເພີ່ມຂຶ້ນຈາກ -0,03% ໃນເດືອນ 07/2017;

- ຖານເງິນຕາປະຈຳເດືອນ 08/2017 ເພີ່ມຂຶ້ນ 231,60 ຕື້ກີບ ຫຼື 0,61% ທຽບໃສ່ເດືອນ 07/2017, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 26,03%. ປະລິມານເງິນ M2 ເພີ່ມຂຶ້ນ 487,13 ຕື້ກີບ ຫຼື 0,65% ທຽບໃສ່ເດືອນ 07/2017 ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12.283,21 ຕື້ກີບ ຫຼື 19,28%;
- ອັດຕາແລກປ່ຽນທົ່ວລະບົບໃນເດືອນ 8/2017 ທຽບເດືອນ 7/2017 ໝັ້ນທ່ຽງໃນຂອບທີ່ກຳນົດໄວ້ ເຫັນໄດ້ຈາກເງິນກີບແຂງຄ່າ 0,17% ທຽບເງິນໂດລາ ແລະ ອ່ອນຄ່າ 1,04% ທຽບເງິນບາດ. ຖ້າສົມທຽບໃສ່ທ້າຍປີຜ່ານມາ ເຫັນວ່າເງິນກີບອ່ອນຄ່າ 0,56% ທຽບກັບເງິນໂດລາ ແລະ ອ່ອນຄ່າ 6,53% ທຽບເງິນບາດ;
- ມູນຄ່າການຊື້-ຂາຍເງິນຕາຕ່າງປະເທດປະຈຳເດືອນ 08/2017 (14/07-11/08/2017) ເຫັນວ່າມູນຄ່າການຊື້-ຂາຍເງິນຕາຕ່າງປະເທດ ຫຼຸດລົງ 11,71% ຖ້າທຽບໃສ່ເດືອນ 07/2017. ທທກ ຂາຍເງິນຕາຕ່າງປະເທດ ສຸດທິ 76,58 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ ຂາຍເງິນບາດສຸດທິ 4.849,43 ລ້ານບາດ ຫຼື 150,18 ລ້ານໂດລາສະຫະລັດທຽບເທົ່າ ແຕ່ຊື້ເງິນໂດລາສຸດທິ 73,60 ລ້ານໂດລາສະຫະລັດ). ໃນນັ້ນ ທຫລ ໄດ້ດຸນດ່ຽງຂາຍເງິນຕາຕ່າງປະເທດໃຫ້ ທທກ ສຸດທິ 66,29 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ ຂາຍເງິນໂດລາສຸດທິ 60,16 ລ້ານໂດລາສະຫະລັດ ແລະ ຂາຍເງິນບາດສຸດທິ 198 ລ້ານບາດ ຫຼື 6,13 ລ້ານໂດລາສະຫະລັດທຽບເທົ່າ). ປະລິມານການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນ ຈຳນວນ 6,63 ລ້ານໂດລາສະຫະລັດທຽບເທົ່າ (ໃນນີ້ປະລິມານຊື້-ຂາຍເງິນໂດລາສະຫະລັດ 3,30 ລ້ານໂດລາສະຫະລັດ ແລະ ເງິນບາດ 107,42 ລ້ານບາດ ຫຼື 3,33 ລ້ານໂດລາສະຫະລັດ);
- ດຸນການຊຳລະກັບຕ່າງປະເທດປະຈຳເດືອນ 08/2017 (13/07-11/08/2017) ໄດ້ມີກະແສເງິນໄຫຼອອກຜ່ານລະບົບທະນາຄານສຸດທິ 122,67 ລ້ານໂດລາສະຫະລັດ. ໃນນັ້ນ, ກະແສເງິນໄຫຼອອກ ຈຳນວນ 800,71 ລ້ານໂດລາສະຫະລັດ ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່ານຳເຂົ້າສິນຄ້າຂອງວິສາຫະກິດ ຈຳນວນ 522,34 ລ້ານໂດລາສະຫະລັດ ແລະ ຊຳລະເງິນກູ້ຂອງຫົວໜ່ວຍທຸລະກິດ ຈຳນວນ 71,59 ລ້ານໂດລາສະຫະລັດ, ສ່ວນກະແສເງິນໄຫຼເຂົ້າ ຈຳນວນ 678,14 ລ້ານໂດລາສະຫະລັດ ຊຶ່ງສ່ວນໃຫຍ່ແມ່ນຮັບຈາກການສົ່ງອອກສິນຄ້າຂອງວິສາຫະກິດຈຳນວນ 313,71 ລ້ານໂດລາສະຫະລັດ, ຮັບເງິນລົງທຶນຈາກຕ່າງປະເທດຂອງບໍລິສັດ ອີທີແອວ ຈຳນວນ 30,33 ລ້ານໂດລາສະຫະລັດ, ທະນາຄານທຸລະກິດ ຝາກນຳ ທຫລ ຈຳນວນ 3.408 ລ້ານບາດ ຫຼື 101,82 ລ້ານໂດລາສະຫະລັດ.

3. <u>ການລະດົມເງິນຝາກ ແລະ ການປ່ອຍສິນເຊື່ອ</u>

- ການລະດົມເງິນຝາກຂອງທະນາຄານທຸລະກິດ: ຮອດວັນທີ 11/08/2017 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 65.907,52 ຕື້ກີບ ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 0,25%. ເງິນຝາກເປັນເງິນກີບເພີ່ມຂຶ້ນ 1,66% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 47,21% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ຫຼຸດລົງ 0,98% ຊຶ່ງກວມເອົາ 52,79% ຂອງເງິນຝາກທັງໝົດ.
- ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ: ຮອດວັນທີ 11/08/2017 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 63.994,18 ຕື້ກີບ ເພີ່ມຂຶ້ນ 1,63% ເມື່ອທຽບໃສ່ເດືອນຜ່ານມາ. ສິນເຊື່ອເປັນເງິນກີບ ກວມເອົາ 49,39% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາຕ່າງປະເທດ ກວມເອົາ 50,61% ຂອງສິນເຊື່ອທັງໝົດ.
- ທະນາຄານນະໂຍບາຍ ປ່ອຍສິນເຊື່ອທັງໝົດ 55,11 ຕື້ກີບ ທຽບໃສ່ເດືອນຜ່ານມາຫຼຸດລົງ 46,12%, ເກັບຕົ້ນທຶນໄດ້ 25,70 ຕື້ກີບ ທຽບໃສ່ເດືອນຜ່ານມາ ຫຼຸດລົງ 6,44% (ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ). ຍອດສິນເຊື່ອຮອດທ້າຍເດືອນ 08/2017 ມີຈຳນວນ 3.106,66 ຕື້ກີບ ເທົ່າກັບ 93,34% ຂອງແຜນການ (3.328,31 ຕື້ກີບ). ໃນນີ້ສິນເຊື່ອຢູ່ເມືອງເປົ້າໝາຍ 2.068,67 ຕື້ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 312,66 ຕື້ກີບ, ບ້ານເຮັດທົດລອງ 3 ສ້າງ 293,77 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 431,56 ຕື້ກີບ.

## 4. ການເຄື່ອນໄຫວຊໍາລະສະສາງ ແລະ ການຊື້-ຂາຍພັນທະບັດ

### 4.1. ການເຄື່ອນໄຫວຊໍາລະສະສາງ

ການຊໍາລະສະສາງດ້ວຍແຊັກຜ່ານສູນຊໍາລະສະສາງໃນເດືອນນີ້ ມີຈໍານວນ 3.894 ສະບັບ ເພີ່ມຂຶ້ນ 23,98% ເປັນເງິນຈໍານວນ 2.167,33 ຕື້ກີບ ເພີ່ມຂຶ້ນ 19,65% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີຈໍານວນ 158 ຄັ້ງ ເພີ່ມຂຶ້ນ 24,41% ເມື່ອທຽບໃສ່ເດືອນຜ່ານມາ ມີມູນຄ່າການໂອນ 681,16 ຕື້ກີບ ເພີ່ມຂຶ້ນ 32,73% ເມື່ອທຽບໃສ່ເດືອນຜ່ານມາ; ສໍາລັບການໂອນເງິນຜ່ານລະບົບຊໍາລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 25/07-24/08/2017 ມີຈໍານວນ 14.397 ຄັ້ງ ລາຍລະອຽດມີດັ່ງນີ້:

– **ສະກຸນເງິນກີບ:** ມີການເຄື່ອນໄຫວ ຈໍານວນ 13.991 ຄັ້ງ ມີມູນຄ່າການໂອນ 4.037,34 ຕື້ກີບ ຫຼຸດລົງ 14,74% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 4.071 ຄັ້ງ. ໃນນັ້ນ ມີ 43 ພາກສ່ວນທີ່ເຮັດທຸລະກໍາ (ທຫລ, ທະນາຄານທຸລະກິດ 38 ແຫ່ງ, ຕະຫຼາດຫຼັກຊັບ, LAPS, BCONEX ແລະ ກະຊວງການເງິນ);

– **ກະຊວງການເງິນ:** ມີການເຄື່ອນໄຫວ ຈໍານວນ 402 ຄັ້ງ ມີມູນຄ່າການໂອນ 562,62 ຕື້ກີບ ຫຼຸດລົງ 31,32%;

– **ສະກຸນເງິນໂດລາສະຫະລັດ:** ມີການເຄື່ອນໄຫວ ຈໍານວນ 2 ຄັ້ງ ມີມູນຄ່າການໂອນ 3.500.000 ໂດລາ;

– **ແລະ ເງິນບາດ:** ມີການເຄື່ອນໄຫວ ຈໍານວນ 2 ຄັ້ງ ມີມູນຄ່າການໂອນ 10.000.000 ບາດ.

### 4.2 ການຊື້-ຂາຍພັນທະບັດ

– ໃນເດືອນ 08/2017 ພັນທະບັດກະຊວງການເງິນບ້ວງລະດົມທຶນ ຜ່ານ ທຫລ (ບ້ວງ ທຫລ ບໍ່ຄໍ້າປະກັນ) ມີການຈໍາໜ່າຍ 41 ຕື້ກີບ ຊຶ່ງປະກອບດ້ວຍ: ບໍລິສັດຫວຍພັດທະນາ 20 ຕື້ກີບ, ກອງທຶນປະກັນສັງຄົມແຫ່ງຊາດ 15 ຕື້ກີບ ແລະ ທະນາຄານພັດທະນາລາວ 6 ຕື້ກີບ. ພ້ອມດຽວກັນນັ້ນ, ກໍ່ໄດ້ໄຖ່ຖອນພັນທະບັດຄືນ ຈໍານວນ 145 ຕື້ກີບ ແລະ 5 ລ້ານໂດລາ ໃນນັ້ນ, ໄຖ່ຖອນພັນທະບັດ ບ້ວງລະດົມຜ່ານ ທຫລ (ບ້ວງ ທຫລ ບໍ່ຄໍ້າປະກັນ) ຈໍານວນ 145 ຕື້ກີບ (ປະກອບມີ: ທະນາຄານກະສິກອນໄທ 40 ຕື້ກີບ, ກອງທຶນປົກປ້ອງຜູ້ຝາກເງິນ 15 ຕື້ກີບ, ທະນາຄານສົ່ງເສີມກະສິກໍາ 5 ຕື້ກີບ, ທະນາຄານພັດທະນາລາວ 35 ຕື້ກີບ ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ 50 ຕື້ກີບ). ສ່ວນການໄຖ່ຖອນພັນທະບັດ ບ້ວງລະດົມທຶນໂດຍກົງ 5 ລ້ານໂດລາ ແມ່ນຈາກທະນາຄານຮ່ວມທຸລະກິດລາວ-ຫວຽດ;

– ພັນທະບັດຂອງກະຊວງການເງິນ ມີຍອດເຫຼືອທັງໝົດ 3 ບ້ວງ ມູນຄ່າ 5.716 ຕື້ກີບ ແລະ 65 ລ້ານໂດລາສະຫະລັດ (ບ້ວງລະດົມທຶນ ທທກ ໂດຍກົງ 154 ຕື້ກີບ ແລະ 65 ລ້ານໂດລາສາຫະລັດ, ພັນທະບັດບ້ວງລ້າງໜີ້ 2.678 ຕື້ກີບ, ບ້ວງລະດົມທຶນຈາກ ທທກ ປະມູນຜ່ານ ທຫລ 2.884 ຕື້ກີບ);

– ສໍາລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 08/2017 ບໍ່ມີການຈໍາໜ່າຍພັນທະບັດ ທຫລ, ປັດຈຸບັນຍັງມີຍອດເຫຼືອພັນທະບັດບໍ່ທັນໄຖ່ຖອນ ທັງໝົດ 404 ລ້ານໂດລາ.

## 5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

- ດັດຊະນີຕະຫຼາດຫຼັກຊັບລາວໃນເດືອນນີ້ປິດຢູ່ທີ່ 1.027,60 ຈຸດ ເພີ່ມຂຶ້ນ 0,64% ເມື່ອທຽບໃສ່ເດືອນຜ່ານມາ ມີປະລິມານຊື້-ຂາຍຮຸ້ນທັງໝົດ 863.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,45 ຕື້ກີບ ຫຼຸດລົງ 1,05% ທຽບໃສ່ເດືອນຜ່ານມາ, ໂດຍເປັນຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 41,94% ຂອງມູນຄ່າການຊື້-ຂາຍທັງໝົດ;

- ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.310 ກີບ/ຮຸ້ນ ຫຼຸດລົງ 196 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ. ມີປະລິມານຊື້-ຂາຍທັງໝົດ 675.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,58 ຕື້ກວ່າກີບ ເພີ່ມຂຶ້ນ 280,05% ເມື່ອທຽບໃສ່ເດືອນຜ່ານມາ ເນື່ອງຈາກມີການອອກຈໍາໜ່າຍຮຸ້ນເພີ່ມທຶນ, ໂດຍເປັນຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 45,71% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ;

- ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.127 ກີບ/ຮຸ້ນ ເພີ່ມຂຶ້ນ 225 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ. ມີປະລິມານຊື້-ຂາຍທັງໝົດ 145.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 743,43 ລ້ານກວ່າກີບ ເພີ່ມຂຶ້ນ 8,01% ເມື່ອທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 44,67% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ;

- ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 7.583 ກີບ/ຮຸ້ນ ຫຼຸດລົງ 17 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,55 ລ້ານກວ່າກີບ ຫຼຸດລົງ 99,84% ເມື່ອທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນພາຍໃນປະເທດ ກວມເອົາ 8,24% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ;

- ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.000 ກີບ/ຮຸ້ນ ເພີ່ມຂຶ້ນ 24 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 2.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,40 ລ້ານກີບ ຫຼຸດລົງ 93,43% ທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 52,27% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ;

- ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 2.905 ກີບ/ຮຸ້ນ ເພີ່ມຂຶ້ນ 5 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 40.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 117.85 ລ້ານກີບ ເພີ່ມຂຶ້ນ 803,83% ທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 88,89% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ.

6. <u>ວຽກງານອື່ນໆ</u>

– ໄດ້ອະນຸຍາດໃຫ້ທະນາຄານທຸລະກິດ ນຳເງິນເຂົ້າ ສປປ ລາວ ຈຳນວນ 363.09 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 1% ທຽບໃສ່ເດືອນຜ່ານມາ. ໃນນີ້ມີເງິນໂດລາສະຫະລັດ ຈຳນວນ 226,52 ລ້ານໂດລາສະຫະລັດ ກວມເອົາ 62% ຂອງເງິນທັງໝົດ, ເງິນບາດ 4.51 ຕື້ບາດ. ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 797.59 ລ້ານໂດລາສະຫະລັດທຽບເທົ່າ ເພີ່ມຂຶ້ນ 70% ທຽບໃສ່ເດືອນຜ່ານມາ. ໃນນີ້ມີເງິນໂດລາສະຫະລັດ ຈຳນວນ 733.51 ລ້ານໂດລາສະຫະລັດ ກວມເອົາ 92% ຂອງເງິນທັງໝົດ, ເງິນບາດ 2,11 ຕື້ບາດ, 58.575 ເອີໂຣ, 15.910 ຝຣັ່ງສະວິດ, 3.745 ປອນສະເຕີລິງ, 5.46 ລ້ານເຢັນ, 18.260 ໂດລາແຄນນາດາ, 110 ໂດລາອົດສະຕາລີ ແລະ 1.200 ລິງກິດມາເລເຊຍ;

– ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: ສຳເລັດການອອກໃບອະນຸຍາດສ້າງຕັ້ງປ່ຽນແທນໃຫ້ແກ່ທະນາຄານ ຫຸ້ນສ່ວນການຄ້າທະຫານ ສາຂາລາວ; ສຳເລັດການລົງກວດກາທະນາຄານ 2 ແຫ່ງຄື: ທະນາຄານອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ ແລະ ທະນາຄານ ການຄ້າສາກົນລາວ ຈຳກັດ ປະຈຳປີ 2016; ສຳເລັດການລົງກວດກາສຸກເສີນ ສະຖາບັນການເງິນຈຸລະພາກທີ່ຮັບຝາກ ເພື່ອການພັດທະນາ;

– ສຳເລັດບົດລາຍງານຕ່າງໆຄື: ບົດລາຍງານຜົນການສະຫຼຸບການກວດກາການຈັດຕັ້ງປະຕິບັດແຜນງານ-ໂຄງການດຳເນີນງານ ໄລຍະ 5 ປີ (2016-2020) ຂອງ ທຫລ ປະຈຳປີ 2016;

– ໄດ້ກວດກາ ແລະ ອອກໃບຢັ້ງຢືນເງິນໄຟໄໝ້ທີ່ສາມາດແລກປ່ຽນໄດ້ ໃຫ້ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ 265,70 ລ້ານກີບ ແລະ ທະນາຄານພັດທະນາລາວ 100 ລ້ານກີບ;

– ໄດ້ຮັບສຳນວນທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ (STR) ຈາກທະນາຄານທຸລະກິດຈຳນວນ 19 ສະບັບ ເຊິ່ງຮອດປະຈຸບັນ STR ລວມທັງໝົດມີ 609 ສະບັບ.

## <u>ພາກທີ II</u>
## <u>ວຽກງານຈຸດສຸມໃນເດືອນຕໍ່ໄປ</u>

– ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ. ຄວບຄຸມປະລິມານເງິນ ແລະ ຮັບປະກັນລະບົບການຊຳລະສະສາງໃຫ້ຄ່ອງຕົວ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ, ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ: ສືບຕໍ່ຕິດ

ຕາມສະພາບອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນໃຫ້ຢູ່ໃນຂອບເຂດທີ່ກຳນົດໄວ້. ຄວບຄຸມປັດໄຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ໄດ້ຕາມແຜນທີ່ກຳນົດໄວ້;

– ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນຳໃຊ້ເງິນກີບ ແລະ ການຊຳລະໂດຍບໍ່ໃຊ້ເງິນສົດ, ເກັບກຳສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;

– ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ທັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ຕິດຕາມການປ່ອຍສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ເສຍເກີນ 3%;

– ສືບຕໍ່ປັບປຸງນິຕິກຳຈຳນວນໜຶ່ງ ເປັນຕົ້ນ: ຂໍ້ຕົກລົງວ່າດ້ວຍການປະຕິບັດຕໍ່ບັນຊີທີ່ບໍ່ມີການເຄື່ອນໄຫວຢູ່ທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຜະລິດຕະພັນຂອງທະນາຄານ; ຂໍ້ຕົກລົງວ່າດ້ວຍຂອບເຂດການໃຫ້ສິນເຊື່ອຂອງທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດ (ສະບັບປັບປຸງ); ຂໍ້ຕົກລົງວ່າດ້ວຍການກູ້ຢືມເງິນຈາກຕ່າງປະເທດຂອງທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍຕົວແທນຜູ້ຖືຮຸ້ນກູ້; ຂໍ້ຕົກລົງວ່າດ້ວຍການຄອບຄອງກິດຈະການ; ຂໍ້ຕົກລົງວ່າດ້ວຍການກຳນົດລາຄາຮຸ້ນ ແລະ ຂໍ້ຕົກລົງວ່າດ້ວຍຕົວແທນຂຶ້ນທະບຽນຮຸ້ນກູ້; ຄຳແນະນຳກ່ຽວກັບຕົວຊີ້ບອກຂອງທຸລະກຳທີ່ສົງໃສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ພ້ອມກັນນັ້ນ, ກໍ່ໄດ້ສຸມໃສ່ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍວ່າດ້ວຍຫຼັກຊັບ; ກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ;

– ສືບຕໍ່ດຳເນີນກອງປະຊຸມດຳເນີນຊີວິດການເມືອງປັບປຸງປົວແປງພັກ ຢູ່ບັນດາຮາກຖານພັກທີ່ຂຶ້ນກັບອົງຄະນະພັກ ທຫລ;

– ສືບຕໍ່ກະກຽມເງື່ອນໄຂການເປີດຮຽນທິດສະດີການເມືອງ-ການປົກຄອງ ໄລຍະສັ້ນ 45 ວັນ ປະຈຳປີ 2017;

– ກະກຽມເງື່ອນໄຂດ້ານຕ່າງໆໃຫ້ແກ່ການດຳເນີນກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຂອງບັນດາຮາກຖານພັກ;

– ກະກຽມຈັດກອງປະຊຸມປຶກສາຫາລືແກ້ໄຂການຫຼົບຫລີກຂອງພະນັກງານ ທຫລ;

– ກະກຽມຈັດກອງປະຊຸມໂຄສະນາເຜີຍແຜ່ກ່ຽວກັບວຽກງານຫຼັກຊັບ ຢູ່ນະຄອນຫຼວງວຽງຈັນຈຳນວນ 3 ແຫ່ງ;

– ກະກຽມຈັດກອງປະຊຸມສຳມະນາໃນຫົວຂໍ້: "ການຄຸ້ມຄອງ ແລະ ກວດກາທາງດ້ານບັນຊີຂອງ ທຫລ, ທະນາຄານທຸລະກິດ ແລະ ສະຖາບັນການເງິນ" ແລະ ໃນຫົວຂໍ້: "ວຽກງານເຕັກໂນໂລຊີຂໍ້ມູນຂ່າວສານ ສຳລັບທະນາຄານ"

– ກະກຽມຈັດຝຶກອົບຮົມໃນຫົວຂໍ້ "ກົນໄກຂໍ້ລິເລີ່ມຫຼາຍຝ່າຍກ່ຽວກັບການປ້ອງກັນວິກິດການ (CMIM) ແລະ ຂັ້ນຕອນການຈັດຕັ້ງປະຕິບັດ";

– ສືບຕໍ່ວຽກງານປ້ອງກັນເວນຍາມຮັກສາຄວາມປອດໄພອາຄານສຳນັກງານໃຫ້ມີຄວາມສະຫງົບປອດໄພ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ
ຜູ້ວ່າການ

ດຣ ສົມພາວ ໄຟສິດ

ສົ່ງ:
- ຄະນະຜູ້ວ່າການ ທຫລ
- ຜູ້ຊ່ວຍຄະນະຜູ້ວ່າການ ທຫລ
- ຫ້ອງວ່າການ ສູນກາງພັກ
- ກົມຄົ້ນຄວ້າສັງລວມ, ສຳນັກງານປະທານປະເທດ
- ກົມສັງລວມເສດຖະກິດ, ຫສນຍ
- ຫ້ອງການກະຊວງແຜນການ ແລະ ການລົງທຶນ
- ຫ້ອງການກະຊວງການເງິນ
- ບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ
- ຄະນະຫ້ອງການ ທຫລ
- ສຳເນົາ